**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 252 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 12 ກຸມພາ 2025

# ແຈ້ງການ

ຮຽນ: - ບັນດາທ່ານ ລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ ທີ່ນັບຖື.

- ບັນດາທ່ານ ເຈົ້າແຂວງ ແລະ ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ທີ່ນັບຖື.

ເລື່ອງ: ທິດຊີ້ນຳ ກ່ຽວກັບຜົນຂອງກອງປະຊຸມໂຕະມົນ ປະຈຳປີ 2024 ພາຍໃຕ້ຫົວຂໍ້ "ເພີ່ມທະວີການເປັນຄູ່ຮ່ວມເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຂອງ ສປປ ລາວ."

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 574/ນຍ, ລົງວັນທີ 28 ກັນຍາ 2021.
- ອີງຕາມ ດຳລັດ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທຶນການຊ່ວຍເຫລືອທາງການ ເພື່ອການພັດທະນາ, ສະບັບເລກທີ 357/ລບ, ລົງວັນທີ 09 ຕຸລາ 2019;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍລະບຽບການ ແລະ ກົນໄກການເຮັດວຽກ ຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 30 ເມສາ 2021.
- ອີງຕາມ ເອກະສານລາຍງານ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 3405/ກຜທ, ລົງວັນທີ 30 ທັນວາ 2024.
- ອີງຕາມ ທິດຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 30 ມັງກອນ 2025.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງທິດຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານ ຊາບດັ່ງນີ້: "ເຫັນດີຕາມການສະເໜີ ຂອງກະຊວງແຜນການ ແລະ ການລົງທຶນ ຄື: 1/. ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການປະສານສົມທົບບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່:

**(1)** ເປັນເຈົ້າການ ແລະ ຍົກລະດັບຄວາມຮັບຜິດຊອບ ໃນການຊຸກຍູ້ໃຫ້ກະຊວງ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ຕ້ອງປະກອບສ່ວນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ **5** ປີ ຄັ້ງທີ **IX (2021-2025)** ໃຫ້ສຳເລັດຕາມຈຸດປະສົງເປົ້າໝາຍ, ພ້ອມທັງ ປະສານສົມທົບກັບຄູ່ຮ່ວມພັດທະນາໃນການຂົນຂວາຍລະດົມແຫຼ່ງທຶນສະໜັບສະໜູນການສ້າງ ແລະ ຈັດສັນງົບປະມານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ **5** ປີ ຄັ້ງທີ **X (2026-2030)** ໃຫ້ສາມາດຈັດຕັ້ງປະຕິບັດໄດ້ ຢ່າງມີປະສິດທິຜົນ ແລະ ປະຕິບັດສອງວາລະແຫ່ງຊາດ ຂອງລັດຖະບານ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃຫ້ສຳເລັດຕາມຄາດໝາຍທີ່ສະພາແຫ່ງຊາດ ໄດ້ຮັບຮອງໄວ້;

**(2)** ກຳນົດບູລິມະສິດທີ່ສຳຄັນ ແລະ ຈະແຈ້ງ ເພື່ອຮັບປະກັນຂະບວນການສ້າງ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ **5** ປີ ຄັ້ງທີ **X (2026-2030)** ໃຫ້ມີປະສິດທິຜົນ ແລະ ປະກົດຜົນເປັນຈິງ ໂດຍການເພີ່ມທະວີການສ້າງລາຍຮັບ ແລະ ກຳນົດຍຸດທະສາດການລົງທຶນ ໃນບັນດາຂະແໜງການສັງຄົມ ເພື່ອຕອບສະໜອງການເຕີບໂຕໃນໄລຍະຍາວ;

**(3)** ຊຸກຍູ້-ສົ່ງເສີມໃນການສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍໃນການດຳເນີນທຸລະກິດ ໃຫ້ເປັນບູລິມະສິດ ແລະ ສົ່ງເສີມການມີສ່ວນຮ່ວມຂອງພາກເອກະຊົນ ໃຫ້ມີສ່ວນຮ່ວມໃນຂະບວນການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ **5** ປີ ຄັ້ງທີ **X (2026-2030)** ແລະ ການສະໜອງດ້ານງົບປະມານ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ **5** ປີ ຄັ້ງທີ **X (2026-2030)** ຕ້ອງສອດຄ່ອງກັບແຜນພັດທະນາລະດັບຊາດ, ຂະແໜງການ ແລະ ທ້ອງຖິ່ນ.

2/. ມອບໃຫ້ກະຊວງການຕ່າງປະເທດ ແລະ ກະຊວງປ້ອງກັນປະເທດ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ ດັ່ງນີ້:

(1) ຮັບປະກັນການຈັດຕັ້ງປະຕິບັດວຽກງານການພັດທະນາແບບຍືນຍົງ ໃຫ້ສອດຄ່ອງກັບແນວທາງ, ນະໂຍບາຍ ແລະ ບູລິມະສິດ ການພັດທະນາ ຂອງ ສປປ ລາວ ກໍຄືແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ເຊື່ອມສານການຈັດຕັ້ງປະຕິບັດວາລະຂອງສາກົນ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ຍຸດທະສາດການເຕີບໂຕສີຂຽວ ແລະ ການກະກຽມຢ່າງຮອບດ້ານ ເພື່ອກ້າວອອກຈາກສະຖານະພາບ ປະເທດດ້ອຍພັດທະນາ ຂອງ ສປປ ລາວ ຢ່າງຍືນຍົງ ແລະ ມີຄຸນນະພາບ ໂດຍຮັບປະກັນຫຼັກການພື້ນຖານ "ພວກເຮົາພ້ອມກັນກ້າວໄປ";

(2) ເອົາໃຈໃສ່ເຜີຍແຜ່, ໂຄສະນາ ແລະ ປຸກຈິດສຳນຶກ ໃຫ້ແກ່ບັນດາກະຊວງ, ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນໃນທົ່ວປະເທດ ກໍຄືສັງຄົມ ກ່ຽວກັບການຈັດຕັ້ງປະຕິບັດວາລະຮອດປີ 2030 ເພື່ອການພັດທະນາແບບຍືນຍົງ ຢູ່ ສປປ ລາວ ລວມທັງ ເນື້ອໃນທີ່ສຳຄັນຂອງບົດລາຍງານແຫ່ງຊາດ ແບບສະໝັກໃຈ ສະບັບທີ III, ຍຸດທະສາດຂ້າມຜ່ານ ຂອງ ສປປ ລາວ ເພື່ອອອກຈາກສະຖານະພາບປະເທດດ້ອຍພັດທະນາ ແລະ ຂໍ້ຕົກລົງ ວ່າດ້ວຍອະນາຄົດ ທີ່ໄດ້ຮັບຮອງໃນກອງປະຊຸມສຸດຍອດ ວ່າດ້ວຍອະນາຄົດ ທີ່ນິວຢອກ, ສ. ອາເມລິກາ;

(3) ເອົາໃຈໃສ່ວຽກງານການເກັບກູ້-ກວດກູ້ ໂດຍສະເພາະຂອດການປະສານງານ ແລະ ການຂົນຂວາຍແຫຼ່ງທຶນຮ່ວມກັນກັບກະຊວງແຜນການ ແລະ ການລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າໃນວຽກງານດັ່ງກ່າວ ໃຫ້ມີຄວາມເຂັ້ມແຂງ, ມີປະສິດທິພາບ ແລະ ປະສິດທິຜົນສູງ ລວມທັງ ນຳໃຊ້ກົນໄກໜ່ວຍງານຂະແໜງການ ເພື່ອເປັນເວທີທີ່ສຳຄັນໃນການປຶກສາຫາລືກັບຄູ່ຮ່ວມພັດທະນາ ເພື່ອຂົນຂວາຍ, ດຶງດູດ ແລະ ການຮ່ວມມືດ້ານວິຊາການ ກັບຄູ່ຮ່ວມພັດທະນາ ແລະ ພາກສ່ວນອື່ນໆ ໃນທຸກລະດັບ.

3/. ມອບໃຫ້ກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ ດັ່ງນີ້:

(1) ກຳນົດບູລິມະສິດ ໃນການແກ້ໄຂສິ່ງທ້າທາຍດ້ານງົບປະມານ ແລະ ກຳນົດຫຼັກການໃນການຄຸ້ມຄອງໜີ້ສິນຢ່າງຮອບດ້ານ ລວມທັງ ອອກແບບໂຄງສ້າງໜີ້ສິນ ຢ່າງມີຈຸດສຸມ, ເນັ້ນການກູ້ຢືມພາຍໃນ ເພື່ອຫຼຸດຜ່ອນຄວາມກົດດັນຂອງໜີ້ສິນພາຍນອກ, ຫັນເປັນທັນສະໄໝໃນການຄຸ້ມຄອງລາຍຮັບ-ລາຍຈ່າຍ, ອັດຊ່ອງຫວ່າງການຮົ່ວໄຫຼຂອງງົບປະມານ, ຂະຫຍາຍຖານອາກອນ (ອາກອນສຸຂະພາບ, ອາກອນຊົມໃຊ້ສຳລັບນ້ຳມັນເຊື້ອໄຟ) ແລະ ອາກອນທີ່ບົ່ມຊ້ອນອື່ນໆ;

(2) ເນັ້ນໜັກຄວາມໂປ່ງໃສດ້ານງົບປະມານ ຊຶ່ງເປັນປັດໃຈທີ່ສຳຄັນໃນການດຶງດູດແຫຼ່ງທຶນ. ໃນຂະນະທີ່ ສປປ ລາວ ພວມຢູ່ໃນໄລຍະການກຽມໃຫ້ແກ່ການປະເມີນສາກົນ ກ່ຽວກັບການດຳເນີນທຸລະກຳທາງການເງິນ ໃນປີ 2025. ສະນັ້ນ, ຈະຕ້ອງໄດ້ປະຕິບັດຕາມຂໍ້ສະເໜີແນະ ຂອງຄະນະປະຕິບັດງານ ຢ່າງສົມເຫດສົມຜົນ ເພື່ອສ້າງສະພາບແວດລ້ອມທາງດ້ານເສດຖະກິດ ທີ່ເອື້ອອຳນວຍ, ກວມລວມ ແລະ ແນ່ໃສ່ການສ້າງພື້ນຖານເສດຖະກິດແບບຍືນຍົງ;

(3) ສືບຕໍ່ຮັດກຸມເພື່ອຫຼຸດຜ່ອນຄວາມກົດດັນຂອງສະພາບເງິນເຟີ້ ແລະ ອັດຕາແລກປ່ຽນ ລວມທັງ ປັບປຸງການປະສານງານດ້ານນະໂຍບາຍໃຫ້ມີຄວາມຕໍ່ເນື່ອງ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ກະຊວງການເງິນ ເພື່ອຮັບປະກັນຄວາມກົມກຽວ ໂດຍຜ່ານການລວມສູນບັນຊີຄັງເງິນແຫ່ງຊາດ.

4/. ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ ດັ່ງນີ້:

(1) ເອົາໃຈໃສ່ປະຕິບັດວາລະແຫ່ງຊາດ ເພື່ອແກ້ໄຂບັນຫາຢາເສບຕິດ ໂດຍແນໃສ່ສົ່ງເສີມການຮ່ວມມືກັບປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ແລະ ທຸກພາກສ່ວນຂອງສັງຄົມ ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນ ການຈັດຕັ້ງປະຕິບັດໃນແຕ່ລະໄລຍະ;

(2) ເພີ່ມທະວີແກ້ໄຂບັນຫາຢາເສບຕິດ ໃຫ້ຫຼຸດໜ້ອຍຖອຍລົງ ໂດຍການຮ່ວມມືກັບບັນດາປະເທດເພື່ອນມິດ, ປະເທດທີ່ມີຊາຍແດນຕິດຈອດກັນ, ຄູ່ຮ່ວມພັດທະນາ ເພື່ອນຳສະເໜີ, ແລກປ່ຽນບົດຮຽນ ແລະ ແນວຄວາມຄິດ ໃນການປະເມີນສະພາບການ ແລະ ຊ່ວຍແກ້ໄຂສິ່ງທ້າທາຍໃນຕໍ່ໜ້າຮ່ວມກັນ ໃຫ້ມີປະສິດທິຜົນ, ແນໃສ່ແກ້ໄຂອຸປະສັກ, ໄພອັນຕະລາຍ ແລະ ສິ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ ໃຫ້ມີທ່າອ່ຽງທີ່ດີຂຶ້ນ ແລະ ສາມາດຈຳກັດ, ຄວບຄຸມການແຜ່ຂະຫຍາຍຂອງຢາເສບຕິດ ລວມທັງ ສານເຄມີຕັ້ງຕົ້ນ ທີ່ເປັນສິ່ງທ້າທາຍໃນປັດຈຸບັນ ໃຫ້ຫຼຸດລົງ ຢ່າງເປັນຮູບປະທຳ. ໃນນັ້ນ, ຖ້າມີແຕ່ ສປປ ລາວ ປະເທດດຽວ ແມ່ນຈະບໍ່ສາມາດແກ້ໄຂໄດ້. ສະນັ້ນ, ຕ້ອງມີການຮ່ວມມືກັນ, ຊ່ວຍເຫຼືອເຊິ່ງ

ກັນ ແລະ ກັນ ເພື່ອຮັກສາ, ຄວບຄຸມ, ຄຸ້ມຄອງຄວາມເປັນລະບຽບຮຽບຮ້ອຍ, ຄວາມໝັ້ນຄົງ ໃນ ສປປ ລາວ, ພາກພື້ນ ແລະ ສາກົນ.

5/. ມອບໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ ດັ່ງນີ້:

(1) ເນັ້ນໜັກເຖິງຄວາມສຳຄັນຂອງການລົງທຶນໃສ່ການພັດທະນາຊັບສິນດ້ານມະນຸດ ແລະ ການສ້າງຄວາມເຂັ້ມແຂງຂອງສະຖາບັນ, ການສຶກສາ, ຍຸດທະສາດການປົກປ້ອງສັງຄົມ, ການເຂົ້າເຖິງການບໍລິການສາທາລະນະສຸກ ທົ່ວໜ້າ, ຄວາມຍຸຕິທຳ, ການປົກຄອງລັດທີ່ດີ ແລະ ມີປະສິດທິຜົນ;

(2) ເອົາໃຈໃສ່ໃນການຈັດສັນບຸລິມະສິດ ເພື່ອສະໜອງການສຶກສາໃຫ້ແກ່ເດັກອາຍຸ 5 ປີ ລວມທັງ ສະໜັບສະໜູນໃນຮູບແບບຕ່າງໆ (ເປັນຕົ້ນແມ່ນ ການກຽມຄວາມພ້ອມກ່ອນເຂົ້າຮຽນ ໂດຍຊຸມຊົນເປັນເຈົ້າການ, ການກຽມຄວາມພ້ອມ 10 ອາທິດ), ພ້ອມທັງ ແກ້ໄຂຄວາມຕ້ອງການການສະໜັບສະໜູນຂອງຊຸມຊົນ ແລະ ຄອບຄົວ ລວມທັງການສ້າງຄວາມເຂັ້ມແຂງ, ຂະຫຍາຍການສະໜອງເບ້ຍລ້ຽງໃຫ້ແກ່ເດັກທີ່ດ້ອຍໂອກາດ ເພື່ອເພີ່ມການເຂົ້າຮຽນ ແລະ ສ້າງມາດຕະການຕ່າງໆ ເພື່ອຫຼຸດຜ່ອນການປະລະການຮຽນ;

(3) ສຸມການລົງທຶນໃສ່ການພັດທະນາວິຊາຊີບຄູ ທີ່ນຳໃຊ້ນະວັດຕະກຳໃໝ່ໆ ແລະ ວິທີການທີ່ມີປະສິດທິພາບໃນການພັດທະນາຄູ;

(4) ສືບຕໍ່ດຳເນີນການຈັດຕັ້ງປະຕິບັດກອງທຶນພັດທະນາອາຊີວະສຶກສາ ເພື່ອລະດົມທຶນເພີ່ມຕື່ມ ເຂົ້າໃສ່ການປັບປຸງຄຸນນະພາບຂອງອາຊີວະສຶກສາ ລວມທັງ ສົ່ງເສີມດ້ານການພັດທະນາວິຊາຊີບ ໂດຍການຍົກສູງຄຸນນະພາບທາງດ້ານການສຶກສາ ແລະ ການພັດທະນາສີມືແຮງງານ ທີ່ມີຄຸນນະພາບ ພ້ອມຮັບປະກັນການມີວຽກເຮັດງານທຳ ເພື່ອຕອບສະໜອງໄດ້ການຂະຫຍາຍໂຕທາງດ້ານເສດຖະກິດ ຢ່າງຍືນຍົງ ແລະ ສ້າງວິຊາຊີບ ທີ່ໝັ້ນຄົງໃຫ້ແກ່ໄວໜຸ່ມ ເພື່ອໃຫ້ເປັນຕະຫຼາດແຮງງານທີ່ມີຄຸນນະພາບ, ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ.

6/. ມອບໃຫ້ກະຊວງສາທາລະນະສຸກ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ ດັ່ງນີ້:

(1) ເນັ້ນໜັກເຖິງຄວາມສຳຄັນຂອງການລົງທຶນໃສ່ການພັດທະນາຊັບສິນດ້ານມະນຸດ ແລະ ການສ້າງຄວາມເຂັ້ມແຂງຂອງສະຖາບັນ, ການສຶກສາ, ຍຸດທະສາດການປົກປ້ອງສັງຄົມ, ການເຂົ້າເຖິງການບໍລິການສາທາລະນະສຸກທົ່ວໜ້າ, ຄວາມຍຸຕິທຳ, ການປົກຄອງລັດທີ່ດີ ແລະ ມີປະສິດທິຜົນ;

(2) ໃຫ້ຈັດສັນບຸລິມະສິດ ເພື່ອຫຼຸດຜ່ອນການຂາດສານອາຫານ ໃນແຜນພັດທະນາສາທາລະນະສຸກ 5 ປີ ຄັ້ງທີ X (2026-2030) ແລະ ຮັບປະກັນການເຂົ້າເຖິງການບໍລິການສຸຂະພາບທີ່ຈຳເປັນ ຢ່າງສະເໝີພາບ, ລວມທັງ ການບໍລິການດ້ານໂພຊະນາການ, ພະຍາດທີ່ບໍ່ຕິດຕໍ່ ແລະ ຕິດຕໍ່ ໂດຍສະເພາະແມ່ຍິງ, ເດັກນ້ອຍ ແລະ ກຸ່ມທີ່ມີຄວາມສ່ຽງ;

(3) ສຸມໃສ່ການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ດ້ານໂພຊະນາການ ໃຫ້ມີປະສິດຕິຜົນ ໂດຍການປັບປຸງປະສິດທິພາບ ແລະ ຄວາມຮັບຜິດຊອບຂອງຂະແໜງການ, ຫຼຸດຜ່ອນການສະໜັບສະໜູນໂຄງການທີ່ບໍ່ຕໍ່ເນື່ອງ, ຫຼີກລ່ຽງຄວາມຊໍ້າຊ້ອນຂອງໂຄງການທີ່ກ່ຽວຂ້ອງກັບໂພຊະນາການ, ການສັກຢາປ້ອງກັນພະຍາດ ແລະ ແຜນງານສຸຂະພາບແມ່ ແລະ ເດັກ ຂອງກະຊວງສາທາລະນະສຸກ ແລະ ຄູ່ຮ່ວມພັດທະນາ ເພື່ອຍົກສູງປະທິດທິຜົນໃນການນຳໃຊ້ງົບປະມານ ໃຫ້ສອດຄ່ອງກົມກ່ຽວກັບແຜນງານ ຢ່າງແທ້ຈິງ;

(4) ເອົາໃຈໃສ່ສ້າງຄວາມເຂັ້ມແຂງ ໃນລະບົບການຕິດຕາມ ແລະ ປະເມີນຜົນ ເພື່ອກຳນົດ ແລະ ແກ້ໄຂຊ່ອງຫວ່າງໃນການລົງທຶນ ເຂົ້າໃນແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ, ພ້ອມທັງ ເລັ່ງລັດການຮ່ວມມືຫຼາຍຂະແໜງການທັງພາກລັດ ແລະ ພາກເອກະຊົນ, ໃນບັນດາກະຊວງຕ່າງໆ ເພື່ອປັບປຸງວຽກງານໂພຊະນາການ ແລະ ຜົນໄດ້ຮັບດ້ານສຸຂະພາບເປັນບຸລິມະສິດໃນການພັດທະນາຊັບສິນດ້ານມະນຸດ.

7/. ມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ສະຫະພັນກຳມະບານລາວ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ ດັ່ງນີ້:

(1) ເນັ້ນໜັກເຖິງຄວາມສຳຄັນຂອງການລົງທຶນໃສ່ການພັດທະນາຊັບສິນດ້ານມະນຸດ ແລະ ການສ້າງຄວາມເຂັ້ມແຂງຂອງສະຖາບັນ, ການສຶກສາ, ຍຸດທະສາດການປົກປ້ອງສັງຄົມ, ການເຂົ້າເຖິງການບໍລິການສາທາລະນະສຸກທົ່ວໜ້າ, ຄວາມຍຸຕິທຳ, ການປົກຄອງລັດທີ່ດີ ແລະ ມີປະສິດທິຜົນ;

(2) ເສີມຂະຫຍາຍອັດຕາປົກຄຸມປະກັນສັງຄົມເຂົ້າສູ່ແຮງງານເຄື່ອນຍ້າຍ, ສ້າງຖານງົບປະມານ ໃນການສະໜອງການບໍລິການໃຫ້ແກ່ປະຊາກອນ ຢ່າງທົ່ວເຖິງ ໂດຍສະເພາະ ກຸ່ມຄົນດ້ອຍໂອກາດຢູ່ເຂດຫ່າງໄກສອກຫຼີກ ຜ່ານການເອົາໃຈໃສ່ຄຸ້ມຄອງລະບົບຂໍ້ມູນ, ອອກແບບສະໜອງການບໍລິການໃນລະບົບປົກປ້ອງສັງຄົມ ໃຫ້ມີປະສິດທິຜົນ ແລະ ເຊື່ອມສານວຽກປົກປ້ອງສັງຄົມ ເຂົ້າໃນວາລະການພັດທະນາແຫ່ງຊາດ ລວມທັງ ເຊື່ອມສານລະບົບຂໍ້ມູນຂ່າວສານ ແລະ ສ້າງຄວາມເຂັ້ມແຂງ ໃນການປະສານງານ ລະຫວ່າງ ບັນດາກະຊວງຂະແໜງການ ແລະ ທ້ອງຖິ່ນ ເພື່ອຮັບປະກັນໃຫ້ເປັນລະບົບທີ່ກົມກຽວ;

(3) ເພີ່ມທະວີການຮ່ວມມືກັບບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ໃນການຍົກລະດັບການຮ່ວມມື ໃນການຈັດຕັ້ງປະຕິບັດແຜນຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ໃຫ້ປະກົດຜົນເປັນຈິງ ໂດຍໃຫ້ມີແຜນດໍາເນີນງານຍຸດທະສາດຄວບຄູ່ກັນ.

8/. ມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ປະສານສົມທົບຮ່ວມກັນ ລະຫວ່າງ ພາກລັດ, ຄູ່ຮ່ວມພັດທະນາ ແລະ ພາກເອກະຊົນ, ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ໃນການສົ່ງເສີມການລົງທຶນ ເຂົ້າໃນການພັດທະນາພື້ນຖານໂຄງລ່າງດ້ານການທ່ອງທ່ຽວ, ແຫຼ່ງທ່ອງທ່ຽວ ແລະ ຜະລິດຕະພັນການທ່ອງທ່ຽວ ຢ່າງມີຈຸດສຸມຄົບວົງຈອນ, ພ້ອມທັງ ສຸມໃສ່ພັດທະນາການບໍລິການ ການທ່ອງທ່ຽວ ໃຫ້ໄດ້ມາດຖານສາກົນ, ຮັກສາໄດ້ເອກະລັກທ້ອງຖິ່ນ, ສ້າງເຄືອຂ່າຍການທ່ອງທ່ຽວແບບມີສ່ວນຮ່ວມຂອງປະຊາຊົນ, ຊຸກຍູ້ໃຫ້ທຸກພາກສ່ວນໃນສັງຄົມມີສ່ວນຮ່ວມໃນການເພີ່ມທະວີເອກະລັກທ້ອງຖິ່ນ, ອະນຸລັກວັດທະນະທໍາ, ປະຫວັດສາດ ແລະ ສົ່ງເສີມການປົກປັກຮັກສາຊັບພະຍາກອນທໍາມະຊາດ ຊີວະນາໆພັນ ທີ່ຕິດພັນກັບການທ່ອງທ່ຽວ ໃຫ້ມີຄວາມຍືນຍົງ ແລະ ໝັ້ນຄົງ.

9/. ມອບໃຫ້ກະຊວງພາຍໃນ ແລະ ກະຊວງຍຸຕິທໍາ ເປັນເຈົ້າການປະສານສົມທົບກັບກະຊວງ, ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ ດັ່ງນີ້:

(1) ເນັ້ນໜັກເຖິງຄວາມສໍາຄັນຂອງການລົງທຶນໃສ່ ການພັດທະນາຊັບສິນດ້ານມະນຸດ ແລະ ການສ້າງຄວາມເຂັ້ມແຂງຂອງສະຖາບັນ, ການສຶກສາ, ຍຸດທະສາດການປົກປ້ອງສັງຄົມ, ການເຂົ້າເຖິງການບໍລິການສາທາລະນະສຸກທົ່ວໜ້າ, ຄວາມຍຸຕິທໍາ, ການປົກຄອງລັດທີ່ດີ ແລະ ມີປະສິດທິຜົນ;

(2) ສົ່ງເສີມທັກສະຄວາມຮູ້ຄວາມສາມາດ ທາງດ້ານການຄ້າ, ເສດຖະກິດ, ພາສາຕ່າງປະເທດ, ວິຊາສະເພາະ ໃຫ້ແກ່ລັດຖະກອນ ທັງໃນພາກລັດ ແລະ ພາກເອກະຊົນ ເພື່ອຍົກສູງຄຸນນະພາບ ແລະ ສົ່ງເສີມການບໍລິການທີ່ດີ ໂດຍຍົກສູງຄຸນນະພາບຂອງພະນັກງານ-ລັດຖະກອນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່, ນໍາໃຊ້ທ່າແຮງບົ່ມຊ້ອນພະນັກງານໜຸ່ມນ້ອຍ, ສ້າງແຮງຈູງໃຈ, ສົ່ງເສີມຄວາມຮູ້ຄວາມສາມາດ ແລະ ຄວາມຊໍານານ ໃນການປະຕິບັດວຽກງານ ໂດຍການສະໜັບສະໜູນທຶນ ໃນການກໍ່ສ້າງພະນັກງານ-ລັດຖະກອນ;

(3) ສົ່ງເສີມການຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບພະນັກງານ-ລັດຖະກອນ, ການພັດທະນາໃຫ້ມີຄຸນນະພາບດີຂຶ້ນ ໂດຍໃຫ້ມີການຝຶກອົບຮົມ ແລະ ພັດທະນາດ້ານແນວຄິດ, ຈິດສໍານຶກ, ຄວາມຍຸຕິທໍາໂປ່ງໃສ, ໃສ່ໃຈໃນການບໍລິຫານຄຸ້ມຄອງລັດທີ່ດີ ແລະ ດ້ານວິຊາສະເພາະເຕັກນິກວິຊາການຂອງຂະແໜງການ;

10/. ມອບໃຫ້ກະຊວງອຸດສະຫະກໍາ ແລະ ການຄ້າ ແລະ ພາກເອກະຊົນ ເປັນເຈົ້າການປະສານສົມທົບກັບກະຊວງ, ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິນຄ້າ ແລະ ລາຄາສິນຄ້າ ເປັນຕົ້ນ ບັນຊີລາຍການສິນຄ້າຄວບຄຸມລາຄາ, ລາຍການສິນຄ້າຕິດຕາມການເໜັງຕີງ, ໂຄງປະກອບລາຄາສິນຄ້າ ແລະ ຄ່າບໍລິການທີ່ລັດຄວບຄຸມ ຫຼື ມີຜົນກະທົບໄວ, ລະບົບເຄືອຂ່າຍຕິດຕາມລາຄາສິນຄ້າ ແລະ ຄ່າບໍລິການ, ລະບົບຕິດຕາມສະພາບການສະໜອງ ແລະ ຄວາມຕ້ອງການ ລວມທັງ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ໃຫ້ເປັນຮູບປະທໍາ ໂດຍເພີ່ມການເອົາໃຈໃສ່ສະໜອງຂໍ້ມູນຂ່າວສານທາງດ້ານການຄ້າ ຂອງ ສປປ ລາວ ທີ່ຫຼາກຫຼາຍ ໃຫ້ມີຄວາມໂປ່ງໃສ, ໜ້າເຊື່ອຖື ແລະ ຍືນຍົງ ແກ່ທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອດຶງດູດການລົງທຶນ.

11/. ມອບໃຫ້ກະຊວງກະສິກໍາ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບກະຊວງ, ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ ດັ່ງນີ້:

(1) ສືບຕໍ່ຍົກສູງ, ປັບປຸງການຜະລິດກະສິກໍາ ແລະ ປຸງແຕ່ງ ເພື່ອສົ່ງອອກ, ການສະໜັບສະໜູນຊາວກະສິກອນໃນການຜະລິດ ລວມທັງ ປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ ແລະ ການລົງທຶນ ເພື່ອພັດທະນາຊັບພະຍາກອນມະນຸດ

ໃນແຕ່ລະຂະແໜງການ (ໂດຍລວມ ແມ່ນໃຫ້ໄປໃນທິດທາງດຽວກັບການຈັດຕັ້ງປະຕິບັດຍຸດທະສາດພັດທະນາກະສິກຳ ກໍຄື: ແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີ ຄັ້ງທີ **X (2026-2030)** ເຊິ່ງປະກອບມີ 5 ແຜນງານຫຼັກ ຄື: 1). ແຜນງານການຜະລິດກະສິກຳ ເພື່ອຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ; 2). ແຜນງານການຜະລິດກະສິກຳ ເພື່ອເປັນສິນຄ້າຊົມໃຊ້ພາຍໃນ ແລະ ສົ່ງອອກ; 3). ແຜນງານພັດທະນາການປຸງແຕ່ງຜະລິດຕະພັນກະສິກຳ ແລະ ປ່າໄມ້; 4). ແຜນງານຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ແບບຍືນຍົງ ແລະ 5). ແຜນງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;

**(2)** ກຳນົດຕົວເລກຄາດໝາຍ ແລະ ຕົວຊີ້ບອກຕ່າງໆ ທີ່ຕິດພັນກັບຂະແໜງກະສິກຳ ແລະ ພັດທະນາຊົນນະບົດ ເຊັ່ນ: ອັດຕາສ່ວນການຂະຫຍາຍຕົວຂອງຂະແໜງການ, ອັດຕາສ່ວນລວມຍອດຜະລິດຕະພັນ, ອັດຕາສ່ວນຄວາມທຸກຍາກຂອງປະຊາກອນ ແລະ ຄົວເຮືອນທຸກຍາກ, ຈຳນວນການສ້າງຄອບຄົວພົ້ນທຸກ, ຄອບຄົວພັດທະນາ, ເນື້ອທີ່ປົກຫຸ້ມປ່າໄມ້, ການຫຼຸດຜ່ອນທາດອາຍເຮືອນແກ້ວ ແລະ ອື່ນໆ ເພື່ອເປັນເອກະພາບ ແລະ ເປັນບ່ອນອີງໃນການກຳນົດຄາດໝາຍເຂົ້າໃນແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ເປັນອັນລະອຽດ.

12/. ມອບໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບກະຊວງ, ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ ດັ່ງນີ້:

**(1)** ຮັບປະກັນການນຳໃຊ້, ການຄຸ້ມຄອງ, ປົກປັກຮັກສາ ແລະ ອະນຸລັກຊັບພະຍາກອນທຳມະຊາດ ລວມທັງສົ່ງເສີມການພັດທະນາຕາມທິດສີຂຽວ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ໃຫ້ມີຄວາມຍືນຍົງ ເພື່ອປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ **X** ໂດຍເອົາໃຈໃສ່ໃນການຫັນເປັນທັນສະໄໝ ໃນວຽກງານທີ່ດິນ ຮ່ວມກັບພາກເອກະຊົນ ໃນການສຶກສາ,   ພັດທະນາ ແລະ ຄຸ້ມຄອງລະບົບຂໍ້ມູນຂ່າວສານທີ່ດິນແຫ່ງຊາດ ພ້ອມທັງ ປັບປຸງຄຳແນະນຳ ກ່ຽວກັບການຈົດທະບຽນສິດນຳໃຊ້ທີ່ດິນ, ມີການແຈ້ງຊຳລະເງິນຜ່ານລະບົບທະນາຄານ ເພື່ອຮັບປະກັນການເກັບລາຍຮັບໃຫ້ຄົບຖ້ວນ ແລະ ພັດທະນາກົນໄກເຊື່ອມຕໍ່ຂໍ້ມູນທີ່ດິນ ພ້ອມທັງ ເຊື່ອມສານເຂົ້າກັບບັນດາລະບົບການເກັບລາຍຮັບຈາກທີ່ດິນ ຂອງກະຊວງການເງິນ;

**(2)** ຊຸກຍູ້ພັດທະນາໂຄງການ ໃຫ້ເຂັ້ມງວດໃນການປະຕິບັດພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ ຕາມເງື່ອນໄຂທີ່ກຳນົດໄວ້ໃນໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ດ້ວຍຮູບການອອກໜັງສືແຈ້ງການ, ແຈ້ງທວງ ແລະ ຈັດກອງປະຊຸມ ພ້ອມທັງ ສຸມໃສ່ປະຕິບັດແຜນງານແຫ່ງຊາດ ຕ່າງໆ ທີ່ຕິດພັນກັບການປ່ຽນແປງດິນຟ້າອາກາດ ຂອງ ສປປ ລາວ ລວມທັງ ສ້າງຍຸດທະສາດ, ດຳລັດ ແລະ ແຜນການຄຸ້ມຄອງຊັບພະຍາກອນທຳມະຊາດ (ແຫຼ່ງນ້ຳ, ອຸຕຸ ແລະ ອຸທົກກະສາດ, ການພະຍາກອນອາກາດ, ການເຕືອນໄພ ແລະ ອື່ນໆ) ເພື່ອຄຸ້ມຄອງນຳໃຊ້ໃຫ້ເກີດປະໂຫຍດສູງສຸດ;

**(3)** ສະໜັບສະໜູນກົນໄກການເຂົ້າເຖິງແຫຼ່ງທຶນສາກົນ ໂດຍສະເພາະ **4** ກອງທຶນ ພາຍໃຕ້ຄວາມຮັບຜິດຊອບຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຕົ້ນ: ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກອງທຶນພາຍໃນ), ກອງທຶນສິ່ງແວດລ້ອມໂລກ, ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ ແລະ ກອງທຶນສະພາບອາກາດ.

13/. ມອບໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນເຈົ້າການປະສານສົມທົບກັບກະຊວງ, ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ ດັ່ງນີ້:

**(1)** ກຳນົດພື້ນຖານໂຄງລ່າງດິຈິຕອນ ຫຼື ພື້ນຖານໂຄງລ່າງສາທາລະນະດິຈິຕອນ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ **X (2026-2030)** ເພື່ອເປັນເຄື່ອງມື ແລະ ວິທີການຂັບເຄື່ອນການຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ ແລະ ເປັນລະບົບ ບໍ່ວ່າຈະເປັນການຂັບເຄື່ອນທາງດ້ານເສດຖະກິດ, ສັງຄົມ, ການປົກຄອງ, ການເຊື່ອມໂຍງ-ເຊື່ອມຈອດ  ແລະ ຂະແໜງການອື່ນໆ, ປັດຈຸບັນ ໂລກໄດ້ກ້າວເຂົ້າສູ່ຍຸກແຫ່ງການປະຕິວັດອຸດສາຫະກຳຄັ້ງທີ 4, ຊຶ່ງເປັນຍຸກແຫ່ງການນຳໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ. ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ພັດທະນາ ແລະ ນຳໃຊ້ເຕັກໂນໂລຊີທັນສະໄໝ ທີ່ເອີ້ນວ່າ ເຕັກໂນໂລຊີດິຈິຕອນ ເຂົ້າໃນການພັດທະນາຂອງຂະແໜງການ ແນ່ໃສ່ການບໍລິຫານ-ຄຸ້ມຄອງ ແລະ ບໍລິການລັດ ໃຫ້ມີຄວາມໂປ່ງໃສ, ສະດວກ, ວ່ອງໄວ ແລະ ຕອບສະໜອງຄວາມຕ້ອງການຂອງປະຊາຊົນ ໂດຍສະເພາະ ການນຳໃຊ້ເຂົ້າໃນການແກ້ໄຂການເກັບລາຍຮັບ;

**(2)** ສືບຕໍ່ນຳໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນຂົງເຂດວຽກງານໃນການຫັນປ່ຽນເປັນດິຈິຕອນ ປະກອບມີ **3** ດ້ານ ເຊັ່ນ: ຫັນການບໍລິຫານລັດແບບດິຈິຕອນ, ສ້າງເສດຖະກິດດິຈິຕອນ ແລະ ສ້າງສັງຄົມດິຈິຕອນ, ຊຶ່ງລັດຖະບານ ໄດ້ວາງວິໄສທັດໄວ້ໃຫ້ປະກົດຜົນເປັນຈິງ ໃນໄລຍະ **20** ປີ ໂດຍສຸມໃສ່ການສ້າງພື້ນຖານໂຄງລ່າງເຕັກໂນໂລຊີ ແລະ ການມີຂໍ້

ມູນຂ່າວສານທີ່ດີ ຈະຊ່ວຍສະໜັບສະໜູນການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ໂດຍການເພີ່ມທະວີທ່າແຮງ ບົ່ມຊ້ອນ ເພື່ອບັນລຸການປະຕິບັດນະໂຍບາຍ ແລະ ເປັນມາດຕະການປະຕິຮູບເສດຖະກິດ ທີ່ເໝາະສົມ.

14/. ມອບໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການປະສານສົມທົບກັບກະຊວງ, ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງເອົາໃຈໃສ່ ເພີ່ມທະວີເອົາໃຈໃສ່ປັບປຸງລະບົບພື້ນຖານໂຄງລ່າງ ໃຫ້ມີຄຸນນະພາບ ແລະ ໂປ່ງໃສ ຕາມມາດຕະຖານສາກົນ ເພື່ອເອື້ອອໍານວຍຄວາມສະດວກ ໃຫ້ແກ່ການດໍາເນີນທຸລະກິດ ໃຫ້ເປັນບູລິມະສິດອັນດັບຕົ້ນ ແລະ ສົ່ງເສີມການມີສ່ວນຮ່ວມຂອງພາກເອກະຊົນ ໃນຂະບວນການສ້າງ ແລະ ປະກອບສ່ວນໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ".

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ຮອງນາຍົກລັດຖະມົນຕີ,
ຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ

ບ່ອນນໍາສົ່ງ:

| | | |
|---|---|---|
| 1. | ທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ | 05 ສະບັບ |
| 2. | ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. | ຫ້ອງວ່າການສໍານັກງານປະທານປະເທດ | 01 ສະບັບ |
| 4. | ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ |
| 5. | ຄະນະ ຫສນຍ ທ່ານລະ | 01 ສະບັບ |
| 6. | ສໍາເນົາ | 04 ສະບັບ |

ສໍານັກງານນາຍົກລັດຖະມົນຕີ ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ເຂັມຄໍາ ແກ້ວໜູຈັນ